Washington State Department of Commerce

**UTILITY ASSISTANCE INFORMATION**
**JUNE 2021**

## ຕ້ອງການຄວາມຊ່ວຍເຫຼືອໃນການຈ່າຍໃບບິນຄ່າໃຊ້ຈ່າຍຂອງທ່ານບໍ?

ຖ້າທ່ານບໍ່ສາມາດຈ່າຍໃບບິນຄ່າໄຟຟ້າ, ແກັສທຳມະຊາດ ຫຼື ນ້ຳໃນໄລຍະການລະບາດຂອງພະຍາດ COVID-19 ໄດ້, ມີການຊ່ວຍເຫຼືອສຳລັບສິ່ງນີ້.

## ໂທຫາບໍລິສັດຊ່ວຍໃນເລື້ອງການໃຊ້ຈ່າຍຂອງທ່ານ. ຖາມຄຳຖາມສອງຂໍ້ນີ້:

- ທ່ານມີຄຸນສົມບັດໃດສຳລັບໂຄງການຊ່ວຍເຫຼືອຫຍັງແດ່?
- ທ່ານສາມາດສ້າງແຜນການຈ່າຍເງິນ ສຳລັບຍອດເງິນທີ່ຍັງເຫຼືອຜ່ານມາບໍ?

ຕ້ອງການຄວາມຊ່ວຍເຫຼືອໃນການຕິດຕໍ່ຫາໄຟຟ້າ, ແກາສທຳມະຊາດ ຫຼື ນ້ຳບໍ?
ໃສ່ທີ່ຢູ່ຂອງທ່ານໃສ່ໃນແຜນທີ່ໃນໜ້ານີ້: https://www.commerce.wa.gov/utility-assistance/.

## ທ່ານອາດຈະມີຄຸນສົມບັດ ສຳລັບໂຄງການຂອງລັດຖະບານທີ່ຊ່ວຍປະຊາຊົນຈ່າຍໃບບິນຄ່າໃຊ້ຈ່າຍຕ່າງໆ.

ທ່ານອາດຈະມີຄຸນສົມບັດໄດ້ຮັບໂຄງການຈາກລັດຖະບານທີ່ມີຊື່ວ່າ "LIHEAP" (ໂຄງການຊ່ວຍເຫຼືອພະລັງງານເຮືອນທີ່ມີລາຍໄດ້ຕ່ຳ) ອັນນີ້ອີງຕາມລາຍໄດ້ຂອງທ່ານ. ກຳລັງພັດທະນາໂຄງການໃໝ່ ແລະ ຄ້າຍຄືກັນສຳລັບໃບບິນຄ່ານ້ຳ. ສິ່ງເຫຼົ່ານີ້ແມ່ນບາງຕົວຢ່າງຂອງລະດັບລາຍໄດ້ທີ່ມີຄຸນວຸດເໝາະສົມ:

- ຂະໜາດຄົວເຮືອນແມ່ນ 1 ຄົນ = ລາຍໄດ້ຕ່ຳກ່ວາ 1,595 ໂດລາຕໍ່ເດືອນ ຫຼື 19,140 ໂດລາຕໍ່ປີ.
- ຂະໜາດຄົວເຮືອນແມ່ນ 2 ຄົນ = ລາຍໄດ້ຕ່ຳກ່ວາ 2,155 ໂດລາຕໍ່ເດືອນ ຫຼື 26,860 ໂດລາຕໍ່ປີ
- ຂະໜາດຄົວເຮືອນແມ່ນ 4 ຄົນ = ລາຍໄດ້ຕ່ຳກ່ວາ 3,275 ໂດລາຕໍ່ເດືອນ ຫຼື 39,300 ໂດລາຕໍ່ປີ

ສຳລັບຂໍ້ມູນ, ໃຫ້ໂທຫາ 2-1-1 ຫຼື ໂທຫາ "ອົງການປະຕິບັດງານຂອງຊຸມຊົນ" ໃນທ້ອງຖິ່ນທີ່ທ່ານອາໄສຢູ່.
ໃຊ້ແຜນທີ່ນີ້ເພື່ອຊອກຫາຂໍ້ມູນຕິດຕໍ່: https://fortress.wa.gov/com/liheappublic/Map.aspx

## ມີແຫຼ່ງຂໍ້ມູນທີ່ຈະຊ່ວຍໃນເລື້ອງການໃຊ້ຈ່າຍອື່ນໆ. ໂທຫາ 2-1-1 ເພື່ອສອບຖາມຂໍ້ມູນ.

ໂລກລະບາດໄດ້ເຮັດໃຫ້ປະຊາຊົນຫຼາຍຄົນໃນນະຄອນຫຼວງວໍຊິງຕັນມີໃບບິນທີ່ຕ້ອງເສນໂດຍບໍ່ຄາດຄິດ. ທ່ານບໍ່ໄດ້ຢູ່ໂດດດ່ຽວ ໂທຫາ 2-1-1 ເພື່ອລົມກັບບຸກຄົນໃດໜຶ່ງທີ່ສາມາດເຊື່ອມຕໍ່ທ່ານກັບບັນດາ ໂຄງການທີ່ຊ່ວຍໃຫ້ປະຊາຊົນຈ່າຍຄ່າສິ່ງຕ່າງໆເຊັ່ນ: ຄ່າເຊົ່າ, ອາຫານ, ສັນຍານອິນເຕີເນັດ ແລະ ອື່ນໆ.